ສະເຫຼີມສະຫຼອງວັນສິ່ງແວດລ້ອມໂລກ
ຂຽນໂດຍ ທ່ານ ສົມພິດ ພົນສົງຄາມ
ມື້ອັງຄານທີ່ 23 ສິງຫາ 2016 ເວລາ 11: 20 -

ໃນເວລາ 6:00 ໂມງ,ຂອງວັນທີ 14ມຶຖຸນາ 2016 ທີ່ສະໂມສອນໃຫຍ່ຫ້ອງວ່າການປົກຄອງແຂວງ,ພະແນກ
ຊັບພະຍາກອນທຳມະຊາດ ແລະ
ສິ່ງແວດລ້ອມແຂວງເຊກອງໄດ້ຈັດລວມມິດຕິງສະເຫຼີມສະຫຼອງວັນສິ່ງແວດລ້ອມໂລກເຊິ່ງມີພະແນ
ກການອ້ອມຂ້ອງແຂວງ,ພ້ອມດ້ວຍພະນັກງານ,ທະຫານຕຳຫຼວດຕະຫຼອດຮອດພໍ່ແມ່ປະຊາຊົນ,ຮ້ານອາຫານ,
ຮ້ານບັນເທິງໃນເທດສະບານແຂວງ
ເຂົ້າຮ່ວມທັງໜົດ148ທ່ານ,ຍິງ44ທ່ານ.ໃນພິທີດັ່ງກ່າວໄດ້ຮັບກຽດເຂົ້າຮ່ວມເປັນປະທານ
ແລະ ກ່າວເປີດພິທີຂອງ ທ່ານ ເຫຼັກໄຫຼ ສີວິໄລຮອງເຈົ້າແຂວງ-ແຂວງເຊກອງ
ປະທານຄະນະກຳມະການຄຸ້ມຄອງສິ່ງແວດລ້ອມແຂວງ.

ເຊິ່ງທ່ານໄດ້ເນັ້ນໃຫ້ເຫັນຄວາມເປັນຫ່ວງເປັນໃຍແລະການເອົາໃຈໃສ່ຂອງຄະນະພັກ
ຂັ້ນເທິງໃນການປົກປັກຮັກສາຊັບພະຍາກອນທຳມະຊາດ
ໂດຍສະເພາະແມ່ນປ່າໄມ້ພາຍໄຕຄຳຂັວນທີ່ວ່າ:

(ຈົ່ງພ້ອມກັນປົກປັກຮັກສາປ່າໄມ້
ເພື່ອທຸກສີ່ງທີ່ມີຊິວິດ).ຈາກນັ້ນ,ທ່ານບຸນລິດສັກສັກບົວວົງ ຮອງພະແນກ
ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມກໍ່ໄດ້ໃຫ້ກຽດຜ່ານສານຂອງພະນະທ່ານ ທອງລຸນສີສຸລິດ
ນາຍົກລັດຖະມົນຕີແຫ່ງ ສປປລາວ ໃນສານໄດ້ເນັ້ນໃຫ້ພວກເຮົາເຫັນວ່າປະຊາຄົມໂລກລວມທັງ ສປປ
 1 / 2

ສະເຫຼີມສະຫຼອງວັນສິ່ງແວດລ້ອມໂລກ
ຂຽນໂດຍ ທ່ານ ສົມພິດ ພົນສົງຄາມ
ມື້ອັງຄານທີ່ 23 ສິງຫາ 2016 ເວລາ 11: 20 -
ລາວໄດ້ມີການເປັນຫ່ວງເປັນໃຍໃນການອະນຸລັກຮັກສາແລະນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມ
ສົມດູນກັບການພັດທະນາແລມີຄວາມຢືນຍົງ.ເພື່ອຫຼດຜ່ອມບັນຫາຕ່າງໆທີ່ເກີດຂື້ນຕາມທຳມະຊາ
ດຢ່າງຮຸນແຮງທີ່ຂື້ນເລື້ອຍໆແລະໃນອະນາຄົດຂອງລູກ
ຫຼານຂອງປະຊາຄົມໂລກຈະຮັບມືກັບໄພທຳມະຊາດ
ໃຫ້ຢ່າງທັນການ,ຫຼັງຈາກນັ້ນຜູ້ເຂົ້າຮ່ວມຊຸມນຸມມິດຕິງກໍ່ໄດ້ປູກຕົ້ມໄມ້ຢູ່ເດີ່ນຫ້ອ
ງວ່າການປົກຄອງແຂວງ,ພາຍຫຼັງປູກຕົ້ນໄມ້ສຳເລັດແລ້ວ ທ່ານເຫຼັກໄຫຼ ສີວິໄລ
ໄດ້ນຳພາຄະນະຍ່າງອອກກຳລັງກາຍຕາມສາຍທາງເທດສະບານ.

 2 / 2